

# ແຜນງານວິເຄາະການສຶກສາ: ການສຶກສາໄລຍະຍາວໃນການພັດທະນາຄູ

## ສິ່ງທີ່ໂດດເດັ່ນໃນບົດລາຍງານ: ການປະເມີນການລົງທຶນຂອງລັດຖະບານອົດສະຕຣາລີໃນການພັດທະນາຄູຢູ່ ສປປ ລາວ
ບົດລາຍງານຂັ້ນສຸດທ້າຍ

ຣົວລາລີ້ ຣໍລິ້ງສເວີດ, ເດັບບີ້ ວອງ, ອີລີຊາເບັດ ຄາຊິຕີ້, ພຣູ ແອນເດີສັນ ແລະ ແຈັດຊີກ້າ ທັອມສັນ

ລັດຖະບານປະເທດອົດສະຕຣາລີ
ກະຊວງການຕ່າງປະເທດ ແລະ ການຄ້າ
ACER
ແຜນງານການວິເຄາະການສຶກສາ ແມ່ນໄດ້ຮັບການສະໜັບສະໜູນໂດຍລັດຖະບານອົດສະຕຣາລີ ແລະ ໄດ້ຮັບການຈັດຕັ້ງປະຕິບັດໂດຍ ສະພາການຄົ້ນຄວ້າການສຶກສາ ຂອງອົດສະຕຣາລີ

© DFAT

# ບົດນຳ

ລັດຖະບານອົດສະຕຣາລີ ໃຫ້ການສະໜັບສະໜູນແກ່ ລັດຖະບານ ສປປ ລາວ ໃນການປະຕິຮູບການສຶກສາຊັ້ນປະຖົມ ໂດຍຜ່ານ ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດການເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານຢູ່ ສປປ ລາວ (ແຜນງານບີຄວາ), ລວມທັງຫຼັກສູດປະຖົມສະບັບປັບປຸງໃໝ່.

ໄລຍະທີ 1 ຂອງແຜນງານບີຄວາ (2015-22) ໄດ້ມີການສະໜັບສະໜູນກະຊວງສຶກສາທິການ ແລະ ກິລາ (ສສກ) ໃນການຈັດຕັ້ງປະຕິບັດຫຼັກສູດປະຖົມສະບັບປັບປຸງໃໝ່ໃນໂຮງຮຽນ ໂດຍເລີ່ມຕັ້ງແຕ່ຂັ້ນ ປ.1 ໃນປີ 2019. ແຜນງານບີຄວາ ໄດ້ນຳເອົາວິທີການການສອນໃໝ່ຫຼາຍຮູບແບບເຂົ້າໃນຫຼັກສູດໃໝ່ ເຊັ່ນ: ການຮຽນ-ການສອນແບບເນັ້ນໃສ່ການປະຕິບັດຕົວຈິງ, ແນວທາງໃນການຮຽນການສອນທີ່ເອົານັກຮຽນເປັນໃຈກາງ, ການປະເມີນເພື່ອປັບປຸງການຮຽນຮູ້, ແລະ ການນຳໃຊ້ການອອກສຽງໃນການສອນອ່ານ. ໄດ້ມີການປະຖົມນິເທດແບບເຊິ່ງໜ້າກ່ຽວກັບວິທີການສອນໃໝ່ເຫຼົ່ານີ້ ແລະ ທຶນສະໜັບສະໜູນວຽກງານສຶກສາໃຫ້ແກ່ບັນດາເມືອງເປົ້າໝາຍຂອງ ແຜນງານບີຄວາ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ ກຸ່ມຜູ້ທີ່ມີສ່ວນຮ່ວມໃນການສະໜັບສະໜູນຄູ, ການຮຽນຮູ້ດ້ວຍຕົນເອງ, ການລົງຕິດຕາມກວດກາ, ແລະ ການປະຊຸມກຸ່ມໂຮງຮຽນ ເພື່ອນຳໃຊ້ວິທີການສອນໃໝ່ເຫຼົ່ານີ້.

ໂດຍເປັນສ່ວນໜຶ່ງຂອງຊຸດການສຶກສາຄົ້ນຄວ້າໄລຍະຍາວ, ໜ່ວຍງານວິເຄາະການສຶກສາ (EAS) ຂອງລັດຖະບານອົດສະຕຣາລີ ໄດ້ສຶກສາຄົ້ນຄວ້າວ່າ ແຜນງານບີຄວາ ໄດ້ປັບປຸງຄຸນນະພາບການສິດສອນ ແລະ ຜົນການຮຽນຮູ້ຂອງນັກຮຽນຄືແນວໃດ. ໂດຍການມອບໝາຍຈາກ ກະຊວງການຕ່າງປະເທດ ແລະ ການຄ້າຂອງລັດຖະບານອົດສະຕຣາລີ, ທີມງານໄດ້ເຮັດຊຸດການສຶກສາຄົ້ນຄວ້າ ເພື່ອສຶກສາແຜນງານກ່ຽວກັບວຽກງານພັດທະນາການຮຽນ-ການສອນໃນ 3 ປະເທດຄື: ສປປ ລາວ, ຕີມໍ-ເລສເຕ ແລະ ວານູອາຕູ.

# ວິທີການ

ການສຶກສາຄັ້ງນີ້ໄດ້ຄົ້ນຄວ້າພາຍໃນຂອບເຂດທີ່ແຜນງານບີຄວາໄດ້ສະໜັບສະໜູນການປັບປຸງຄຸນນະພາບການສອນ ແລະ ການຮູ້ໜັງສືຂອງນັກຮຽນໃນທຸກໆເມືອງເປົ້າໝາຍໃນໄລຍະທີ 1.

ການສຶກສາຄັ້ງນີ້ໄດ້ນຳໃຊ້ວິທີການຄົ້ນຄວ້າແບບປະສົມປະສານໂດຍນຳໃຊ້ຂໍ້ມູນໃນເຊີງປະລິມານ ແລະ ຂໍ້ມູນໃນເຊີງຄຸນນະພາບ. ໃນປີ 2019 ແລະ 2021, ໄດ້ມີການສຳຫຼວດຜູ້ອຳນວຍການໂຮງຮຽນ ແລະ ຄູສອນ ປ.1 ໃນບັນດາໂຮງຮຽນປະຖົມຂອງລັດ 355 ແຫ່ງ, ແລະ ໄດ້ມີການທົດສອບຄວາມຮູ້ຂອງນັກຮຽນ ປ.1. ໃນປີ 2019, 2021 ແລະ 2022, ໄດ້ມີການດຳເນີນການທົດສອບກໍລະນີສຶກສາໃນໂຮງຮຽນ 12 ແຫ່ງ, ເຊິ່ງລວມມີ ການສຳພາດຜູ້ອຳນວຍການ, ຄູສອນ ປ.1 ແລະ ຜູ້ເຮັດວຽກສຶກສານິເທດ, ແລະ ດຳເນີນການສັງເກດການສອນໃນຫ້ອງຮຽນ. ນອກນັ້ນ, ຍັງໄດ້ມີການດຳເນີນການສຳພາດໃນຂັ້ນສູນກາງ ໃນປີ 2022 ນຳອີກ.




ພາກຕໍ່ໄປນີ້ ຈະລາຍງານເຖິງການຄົ້ນພົບທີ່ສຳຄັນ. ເມື່ອພວກເຮົາທົບທວນຜົນການຄົ້ນພົບ, ເຮົາຈຳເປັນຕ້ອງໄດ້ພິຈາລະນາເຖິງສິ່ງທ້າທາຍຕໍ່ໄປນີ້ ເຊັ່ນ: ຜົນກະທົບຂອງໂຄວິດ-19 ຕໍ່ກັບການສືບຕໍ່ການສອນຂັ້ນ ປ.1 ແລະ ປະສົບການກ່ອນໄວຮຽນຂອງນັກຮຽນ ຂັ້ນ ປ.1 ທີ່ເຂົ້າຮ່ວມການທົດສອບໃນປີ 2021; ແລະ ຈຳນວນຄູຍ້າຍອອກທີ່ສູງກວ່າທີ່ຄາດໄວ້ໃນໄລຍະການເຮັດການສຶກສາຄົ້ນຄວ້າ.

# ສະຫຼຸບຜົນການຄົ້ນພົບ

**ໂດຍລວມແລ້ວ, ແຜນງານບີຄວາ ໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ອົງປະກອບຕ່າງໆຂອງຄຸນນະພາບການສອນ.**

ມັນຕ້ອງໄດ້ໃຊ້ເວລາ ແລະ ມີການຊຸກຍູ້ສົ່ງເສີມ ແລະ ສະໜັບສະໜູນ ເພື່ອສືບຕໍ່ສ້າງຄວາມເຂົ້າໃຈໃຫ້ແກ່ຄູສອນກ່ຽວກັບວິທີການໃໝ່ໆໃນການສອນ ແລະ ການປະເມີນການຮຽນຂອງນັກຮຽນ, ແລະ ເພື່ອນໍາໃຊ້ເຕັກນິກເຫຼົ່ານີ້ ເຂົ້າໃນການສອນຢ່າງເຕັມສ່ວນ ແລະ ເປັນປົກກະຕິ. ສະນັ້ນ, ມັນມີຄວາມຈໍາເປັນຕ້ອງໄດ້ມີແນວທາງໃນການພັດທະນາວິຊາຊີບຢ່າງຕໍ່ເນື່ອງ ແລະ ເປັນລະບົບໃນໄລຍະຍາວ.

> **ມັນເປັນການປ່ຽນແປງທີ່ຍິ່ງໃຫຍ່ສໍາລັບຄູສອນ. ມັນຕ້ອງໃຊ້ເວລາເພື່ອປັບຕົວໃຫ້ລຶ້ງເຄີຍກັບວິທີການຮຽນແບບເອົານັກຮຽນເປັນໃຈກາງ ແລະ ປັບປ່ຽນອອກຈາກຫຼັກສູດເກົ່າ. - ຜູ້ຖືກສໍາພາດຢູ່ຂັ້ນສູນກາງ**

ຜົນການຮຽນຮູ້ໜັງສືຂອງນັກຮຽນ ປ.1 ສະແດງໃຫ້ເຫັນວ່າ ນັກຮຽນມີການພັດທະນາຂຶ້ນໃນບາງສ່ວນ ຫຼັງຈາກທີ່ມີການນໍາໃຊ້ຫຼັກສູດສະບັບປັບປຸງໃໝ່, ແຕ່ນັກຮຽນຕ້ອງການເວລາຫຼາຍຂຶ້ນ ແລະ ການສະໜັບສະໜູນທີ່ເໝາະສົມ ເພື່ອໃຫ້ສາມາດບັນລຸລະດັບຄາດໝາຍຂອງຫຼັກສູດພາສາລາວໄດ້. ນີ້ແມ່ນ ສິ່ງຄາດຫວັງ ທີ່ຈະເກີດຂຶ້ນໃນໄລຍະເລີ່ມຕົ້ນຂອງຂະບວນການປະຕິຮູບທີ່ຊັບຊ້ອນ, ໂດຍສະເພາະມີວິກິດໂຄວິດ-19 ທີ່ສົ່ງຜົນຕໍ່ການຮຽນການສອນ.

ໃນລະຫວ່າງປີ 2019 ຫາ 2021, ອັດຕາສ່ວນຂອງນັກຮຽນທີ່ມີຜົນທົດສອບການຮຽນ "ດີ" ໄດ້ເພີ່ມຂຶ້ນຈາກ 12% ເປັນ 21%. ປະມານໜຶ່ງສ່ວນສີ່ຂອງນັກຮຽນ ປ.1 ໄດ້ຖືກປະເມີນໃນລະດັບ "ຕໍ່າ" ໃນທັງສອງປີ. ຜົນທົດສອບການຮຽນຂອງນັກຮຽນມີຄວາມແຕກຕ່າງ ຍ້ອນປັດໄຈທີ່ແຕກຕ່າງກັນ ເຊິ່ງລວມມີ ແຂວງທີ່ອາໄສຢູ່, ເພດ, ພາສາທີ່ໃຊ້ຢູ່ບ້ານ ແລະ ຖານະຂອງຄອບຄົວ. ນອກນັ້ນ, ກໍຍັງມີປັດໄຈທີ່ກ່ຽວກັບຄູ. ເຮົາເຫັນວ່າ ນັກຮຽນ ໃນຫ້ອງຮຽນທີ່ມີຄູເພດຍິງທີ່ມີປະສົບການ ແລະ ເປັນຄູສອນປະຈໍາ ຈະມີຜົນການຮຽນທີ່ດີກວ່າ.

**ພວກເຮົາຈໍາເປັນຕ້ອງມີການສົ່ງເສີມທັດສະນະຄະຕິທາງບວກຕໍ່ການຮຽນຮູ້ໃຫ້ນັກຮຽນ.**

ຜູ້ເຂົ້າຮ່ວມການສຶກສາຄົ້ນຄວ້າໄດ້ສັງເກດເຫັນວ່າ ການມີສ່ວນຮ່ວມ, ຄວາມສົນໃຈ, ການຮ່ວມມື, ແລະ ຄວາມເປັນຢູ່ທີ່ດີຂອງນັກຮຽນ ແມ່ນຢູ່ໃນລະດັບທີ່ດີຂຶ້ນ, ແລະ ໃຫ້ເຫດຜົນວ່າຫຼັກສູດສະບັບປັບປຸງໃໝ່ ປະກອບສ່ວນເຂົ້າໃນການປ່ຽນແປງນີ້. ມັນເປັນສິ່ງທີ່ສໍາຄັນທີ່ ຄູ ແລະ ນັກຮຽນ ຕ້ອງໄດ້ຮັບການສະໜັບສະໜູນເພື່ອໃຫ້ພວກເຂົາສາມາດຫັນປ່ຽນ ຜົນໄດ້ຮັບໃນເບື້ອງຕົ້ນຂອງການມີສ່ວນຮ່ວມ ໄປສູ່ການຮຽນຮູ້ທີ່ດີຂຶ້ນ. ສິ່ງເຫຼົ່ານີ້ແມ່ນຮຽກຮ້ອງໃຫ້ມີແນວທາງ ແລະ ວິທີການທີ່ມີການຮ່ວມມື ແລະ ມີຈຸດສຸມໃນລະບົບການສຶກສາ, ແລະ ໂຮງຮຽນ, ຈາກພໍ່ແມ່ ແລະ ຊຸມຊົນ.

## ຄຸນນະພາບການສອນ

### ການປ່ຽນແປງຄວາມຮູ້, ທັດສະນະຄະຕິ ແລະ ການສອນຂອງຄູ

**ການປະຖົມນິເທດທີ່ໄດ້ຮັບການສະໜັບສະໜູນຈາກແຜນງານບີຄວາ ພ້ອມທັງສື່ການຮຽນການສອນຂອງຫຼັກສູດສະບັບປັບປຸງໃໝ່ ເຮັດໃຫ້ຄູສອນ ປ.1 ມີຄວາມຮູ້ ແລະ ຄວາມໝັ້ນໃຈຕໍ່ກັບເນື້ອໃນຂອງການສອນວິຊາພາສາລາວເພີ່ມຂຶ້ນ.**

ຄູສອນຂັ້ນ ປ.1 ຍັງໄດ້ມີການພັດທະນາຂອບເຂດຍຸດທະສາດການຮຽນການສອນຂອງເຂົາເຈົ້າ.

ປະຖົມນິເທດໃນຄັ້ງນີ້ໄດ້ມີຜູ້ເຂົ້າຮ່ວມຈໍານວນຫຼາຍ. ຄູສອນ ແລະ ຜູ້ອໍານວຍການ ເຫັນຄຸນຄ່າຂອງການຝຶກອົບຮົມດັ່ງກ່າວ ເນື່ອງຈາກມັນເປັນການປະຖົມນິເທດເນື້ອໃນຫຼັກສູດສະບັບປັບປຸງໃໝ່. ໃນຂະນະທີ່ແນວທາງຂອງແຜນງານບີຄວາໃນໄລຍະທີ 1 ເປັນຈຸດເລີ່ມຕົ້ນທີ່ດີ ເພື່ອສະໜັບສະໜູນຄູໃນການຈັດຕັ້ງປະຕິບັດຫຼັກສູດສະບັບປັບປຸງໃໝ່, ຜູ້ເຂົ້າຮ່ວມໃນການສຶກສາຄົ້ນຄວ້າ ໄດ້ເນັ້ນໜັກເຖິງຄວາມຈໍາເປັນຂອງການພັດທະນາວິຊາຊີບຢ່າງຮອບດ້ານ ແລະ ຢ່າງຕໍ່ເນື່ອງ ເພື່ອສ້າງຄວາມຮູ້ ແລະ ຮອບຮອມທັກສະຄວາມສາມາດ.

ການສຸມໃສ່ການພັດທະນາວິຊາຊີບຄູໃນ ແຜນງານບີຄວາໄລຍະທີ 2 ຈະສາມາດຊ່ວຍໃຫ້ກະຊວງສຶກສາ ສາມາດຕອບສະໜອງຄວາມຕ້ອງການໃນການພັດທະນາວິຊາຊີບທີ່ໄດ້ລະບຸໄວ້ໃນການສຶກສາຄົ້ນຄວ້ານີ້ບາງຢ່າງໄດ້. ສິ່ງທີ່ຄົ້ນພົບໃນການສຶກສາຄັ້ງນີ້ ປະສົມປະສານການຕິດຕາມ, ການປະເມີນ ແລະ ຮຽນຮູ້ຢ່າງຕໍ່ເນື່ອງຂອງ ແຜນງານບີຄວາ ໄດ້ໃຫ້ຂໍ້ມູນທີ່ອຸດົມສົມບູນທີ່ສາມາດສະໜັບສະໜູນບັນດາກິດຈະກໍາທີ່ແນ່ໃສ່ການພັດທະນາວິຊາຊີບ ທີ່ຕອບສະໜອງຕໍ່ຄວາມຕ້ອງການທີ່ໄດ້ຖືກກໍານົດໄວ້.

## ການຄົ້ນພົບທີ່ສຳຄັນ

| | | | |
|---|---|---|---|
| **ຄວາມຮູ້ ແລະ ທັດສະນະຄະຕິ** | ມີການປະຖົມນິເທດ ແລະ ສື່ການຮຽນການສອນຂອງຫຼັກສູດສະບັບປັບປຸງໃໝ່ ທີ່ສະໜັບສະໜູນໂດຍ ແຜນງານບີຄວາ ທີ່ສ້າງຄວາມຮູ້ທາງວິຊາຊີບໃນເນື້ອໃນວິຊາພາສາລາວ ແລະ ການສອນແບບເອົານັກຮຽນເປັນໃຈກາງ, ແຕ່ຍັງຕ້ອງການການສະໜັບສະໜູນຢ່າງຕໍ່ເນື່ອງ | ສື່ການຮຽນການສອນຂອງຫຼັກສູດສະບັບປັບປຸງໃໝ່ ເປັນການສະໜັບສະໜູນທີ່ສຳຄັນໃຫ້ແກ່ຄູສອນ ແລະ ເປັນການສ້າງຄວາມໝັ້ນໃຈໃຫ້ແກ່ຄູ. | ໃນຂະນະທີ່ຄູສອນສ່ວນໃຫຍ່ນຳໃຊ້ຫຼັກສູດສະບັບປັບປຸງໃໝ່, ແຕ່ກໍ່ມີຄູບາງຈຳນວນກໍຍັງມີທ່າທີຕໍ່ຕ້ານ ຫຼື ໄດ້ກັບຄືນໄປສອນແບບເກົ່າໆ. |
| **ການປະຕິບັດການສອນ** | ຄູໄດ້ລາຍງານເຖິງການນຳໃຊ້ຍຸດທະສາດການສອນທີ່ເອົານັກຮຽນເປັນໃຈກາງທີ່ຫຼາກຫຼາຍເຊັ່ນ: ການເຮັດວຽກເປັນຄູ່/ກຸ່ມ, ກິດຈະກຳການຮຽນຮູ້ທີ່ເນັ້ນໃສ່ການປະຕິບັດຕົວຈິງ, ແລະ ການນຳໃຊ້ສື່ການຮຽນການສອນທີ່ຫຼາກຫຼາຍ. ແຕ່ຄວາມເຂົ້າໃຈຕໍ່ກັບວິທີການເຫຼົ່ານີ້ຍັງມີຈຳກັດ. ຈາກການສັງເກດການສອນໃນຫ້ອງຮຽນເຫັນວ່າ ການນຳໃຊ້ວິທີການສອນແບບໃໝ່ຍັງມີຄວາມແຕກຕ່າງກັນໃນບາງໂຮງຮຽນ. | ມີການປ່ຽນແປງໃນທາງບວກຕໍ່ກັບການປະເມີນເພື່ອປັບປຸງການຮຽນ, ແລະ ມີຄວາມຮັບຮູ້ ແລະ ມີການນຳໃຊ້ຄູ່ມືການຮຽນຮູ້ (ຮູບຣິກ) ທີ່ເພີ່ມຂຶ້ນ. ຄູຍັງຕ້ອງການການຊ່ວຍເຫຼືອເພີ່ມເຕີມໃນການປະເມີນການຮຽນຂອງນັກຮຽນ. | ໃນຂະນະທີ່ໄດ້ມີການຫັນປ່ຽນນະໂຍບາຍ ເພື່ອເສີມສ້າງຄວາມຮັບຮູ້, ຄວາມເຂົ້າໃຈ ແລະ ສົ່ງເສີມການສອນກ່ຽວກັບການສຶກສາຮຽນຮ່ວມໃນຫ້ອງຮຽນນັ້ນ, ແຕ່ຜົນຈາກການຄົ້ນຄວ້າເຫັນວ່າ ໃນພາກປະຕິບັດບໍ່ມີການປ່ຽນແປງທີ່ສຳຄັນໃນການສອນໃນຫ້ອງຮຽນ. |



## ປັດໄຈຫຼັກທີ່ສົ່ງຜົນຕໍ່ຄຸນນະພາບຂອງການສອນ

ການມີສ່ວນຮ່ວມໃນການພັດທະນາວິຊາຊີບຄູ, ການໃຫ້ການສະໜັບສະໜູນດ້ານວິຊາການຈາກ ຜູ້ອຳນວຍການ ແລະ ເພື່ອນຮ່ວມງານ ແລະ ການສະໜັບສະໜູນຈາກຜູ້ເຮັດວຽກສຶກສານິເທດ ເຮັດໃຫ້ຄູສາມາດປັບຕົວເຂົ້າກັບຫຼັກສູດໃໝ່ໄດ້. ເຖິງຢ່າງໃດກໍ່ຕາມ, ບັນດາອຸປະສັກໃນການສອນທີ່ການຄົ້ນຄວ້ານີ້ໄດ້ພົບຊີ້ໃຫ້ເຫັນວ່າ ການສະໜັບສະໜູນດ້ານວິຊາການທີ່ມີຄຸນນະພາບຕ້ອງມີລະບົບທີ່ດີ ແລະ ເປັນລະບົບຫຼາຍກວ່ານີ້.

### ການພັດທະນາວິຊາຊີບ

ການປະຖົມນິເທດທີ່ສະໜັບສະໜູນໂດຍ ແຜນງານບີຄວາ ໄດ້ໃຫ້ຂໍ້ມູນເບື້ອງຕົ້ນທີ່ສຳຄັນກ່ຽວກັບເນື້ອໃນ ແລະ ຍຸດທະສາດຂອງຫຼັກສູດສະບັບປັບປຸງໃໝ່. ກຸ່ມຜູ້ທີ່ມີສ່ວນຮ່ວມໃນການສະໜັບສະໜູນຄູ ແລະ ການຮຽນຮູ້ດ້ວຍຕົນເອງ ແມ່ນໄດ້ຮັບການຕີລາຄາສູງ, ແຕ່ໂອກາດທີ່ຈະໄດ້ເຂົ້າຮ່ວມແມ່ນບໍ່ເປັນປົກກະຕິ

### ການສະໜັບສະໜູນຈາກເພື່ອນຮ່ວມງານ

ຄູ ປ.1 ເຫັນຄຸນຄ່າສູງຕໍ່ກັບການສະໜັບສະໜູນດ້ານວິຊາການ ຈາກຜູ້ອຳນວຍການ, ເພື່ອນຮ່ວມງານ ແລະ ຜູ້ທີ່ເຮັດວຽກສຶກສານິເທດ. ການເພີ່ມຂຶ້ນຂອງການສະໜັບສະໜູນຂອງຜູ້ເຮັດວຽກສຶກສານິເທດໃຫ້ແກ່ໂຮງຮຽນທີ່ເປັນກໍລະນີສຶກສາຄົ້ນຄວ້າ ໃນລະຫວ່າງປີ 2019 ຫາ 2021 ແມ່ນມີຄວາມຍືນຍົງ. ຜູ້ເຂົ້າຮ່ວມສຶກສາໃນປີ 2022 ໄດ້ຊີ້ໃຫ້ເຫັນວ່າ ຂອບເຂດຂອງການສະໜັບສະໜູນຈາກຜູ້ເຮັດວຽກສຶກສານິເທດກວ້າງຂຶ້ນ.

### ການປັບປຸງປະສິດທິຜົນ

ການສະໜັບສະໜູນໃຫ້ແກ່ຄູ ແມ່ນມີປະສິດທິຜົນຫຼາຍຂຶ້ນ ເມື່ອຜູ້ທີ່ໄປຊ່ວຍຄູມີຄວາມຮູ້ດ້ານວິຊາການທີ່ເໝາະສົມ ແລະ ປັດໄຈອຳນວຍຄວາມສະດວກທີ່ພຽງພໍ ເຊັ່ນ ງົບປະມານ, ເຄື່ອງມື, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ (ICT) ແລະ ເວລາ. ຄູຕ້ອງການເຄື່ອງມື, ເຕັກໂນໂລຊີ, ຄວາມຮູ້ ແລະ ທັກສະໃນການໃຊ້ອຸປະກອນເຫຼົ່ານີ້.

### ປັດໄຈດ້ານໂຮງຮຽນ

ອຸປະກອນຂາດເຂີນ ຫຼື ບໍ່ພຽງພໍ ໄດ້ຖືກລາຍງານວ່າເປັນບັນຫາໃນປີ 2019. ບັນຫານີ້ຫຼຸດໜ້ອຍລົງ ຫຼັງຈາກມີການແຈກຢາຍສື່ການຮຽນການສອນຂອງຫຼັກສູດສະບັບປັບປຸງໃໝ່.

### ປັດໄຈດ້ານຄູ

ຄວາມຮູ້ ແລະ ປະສົບການໃນການສອນພາສາລາວມີຈຳກັດ, ລວມທັງຄວາມເຂົ້າໃຈໃນອົງປະກອບຫຼັກຂອງຫຼັກສູດສະບັບປັບປຸງໃໝ່ ເຊິ່ງຖືກລາຍງານວ່າເປັນສິ່ງທ້າທາຍຫຼັກ.

### ປັດໄຈດ້ານນັກຮຽນ

ທັກສະພາສາລາວທີ່ຕໍ່າ, ຄວາມພ້ອມກ່ອນການເຂົ້າຮຽນຂອງນັກຮຽນທີ່ຕໍ່າ, ການຂາດໂຮງຮຽນ, ແລະ ຂາດການມີສ່ວນຮ່ວມຂອງພໍ່ແມ່ໃນການສະໜັບສະໜູນການຮຽນຂອງນັກຮຽນ ແມ່ນເປັນອຸປະສັກ

## ຜົນການຮຽນຮູ້ໜັງສືຂອງນັກຮຽນ

### ການປ່ຽນແປງໃນຜົນການຮຽນຮູ້ໜັງສືຂອງນັກຮຽນ

**ນັກຮຽນຂັ້ນປ.1 ຕ້ອງການເວລາ ແລະ ການສະໜັບສະໜູນທີ່ຫຼາຍກວ່າເກົ່າ ເພື່ອໃຫ້ເຂົາເຈົ້າສາມາດບັນລຸລະດັບຄາດໝາຍການຮູ້ໜັງສືຂອງຫຼັກສູດພາສາລາວສະບັບປັບປຸງໃໝ່ໄດ້.**

ຈາກການທົດສອບການຮູ້ໜັງສືປີ 2021 ໄດ້ຊີ້ໃຫ້ເຫັນວ່າ ໂດຍລວມ ຜົນການຮຽນຂອງນັກຮຽນຂັ້ນ ປ.1 ດີຂຶ້ນເລັກນ້ອຍ ຫຼັງຈາກທີ່ມີການນຳໃຊ້ຫຼັກສູດສະບັບປັບປຸງໃໝ່ ເຊິ່ງມີຈຳນວນນັກຮຽນທີ່ສາມາດສະແດງທັກສະທີ່ຊັບຊ້ອນຂຶ້ນຫຼາຍຂຶ້ນ. ແນວໃດກໍ່ຕາມ, ຜົນທົດສອບ ມີຄວາມແຕກຕ່າງກັນໃນລະດັບປະເທດ, ລະດັບແຂວງ, ແລະ ລະຫວ່າງເດັກຍິງ ແລະ ເດັກຊາຍ ເຊິ່ງໄດ້ສະແດງໃຫ້ເຫັນຄວາມທ້າທາຍທີ່ໃຫຍ່ ຕໍ່ກັບການຮຽນຮູ້ພາສາລາວ.

ຜົນຈາກການທົດສອບໄດ້ຢັ້ງຢືນເຖິງ ຄວາມເຊື່ອມໂຍງລະຫວ່າງກຸ່ມຊົນເຜົ່າ, ຄວາມທຸກຍາກ ແລະ ຜົນການຮຽນຂອງນັກຮຽນທີ່ຕໍ່າໃນ ສປປ ລາວ. ຈຳນວນນັກຮຽນທີ່ຂາດຮຽນທີ່ສູງໃນມື້ສອບເສັງ ທັງປີ 2019 ແລະ 2021 ໄດ້ຢັ້ງຢືນບັນຫາທ້າທາຍຂອງການຂາດຮຽນຂອງນັກຮຽນ. ການສຶກສາຄົ້ນຄວ້າໃນລະດັບສາກົນສະແດງໃຫ້ເຫັນວ່າ ມີຄວາມສ່ຽງທີ່ເດັກນ້ອຍດ້ອຍໂອກາດຈະມີຜົນການຮຽນຫຼຸດລົງຕື່ມອີກ. ນັກຮຽນທີ່ມີຜົນການຮຽນບໍ່ດີໃນຊຸມປີຕົ້ນໆຂອງການຮຽນ ມັກຈະພົບຄວາມຫຍຸ້ງຍາກໃນການຮຽນເພື່ອໃຫ້ທັນຄົນອື່ນ.

ສະນັ້ນ, ພວກເຮົາຈຶ່ງມີຄວາມຈຳເປັນທີ່ຈະຕ້ອງໄດ້ສະໜັບສະໜູນໃຫ້ມີໂອກາດໃນການສ້າງທັກສະໃນການປາກເວົ້າໃຫ້ແກ່ນັກຮຽນ ແລະ ທັກສະໃນການກຽມຄວາມພ້ອມກ່ອນເຂົ້າໂຮງຮຽນ ໃນສະຖານທີ່ການສຶກສາ ແລະ ຢູ່ບ້ານ. ນັກຮຽນມີແນວໂນ້ມທີ່ຈະຕ້ອງການ ການສອນເວົ້າພາສາລາວແບບເຂັ້ມຂຸ້ນ (ຕົວຢ່າງ: 3 ຫາ 4 ຊົ່ວໂມງຕໍ່ມື້ ເປັນເວລາຢ່າງໜ້ອຍ 6 ຫາ 9 ເດືອນ) ແລະ ການກະຕຸ້ນຢ່າງເຂັ້ມຂຸ້ນ ເພື່ອປັບປຸງຄວາມສາມາດທາງດ້ານສະຕິປັນຍາທົ່ວໄປ ກ່ອນທີ່ເຂົາເຈົ້າຈະພ້ອມຮຽນໃນຂັ້ນ ປ.1. ນອກຈາກນີ້, ຄອບຄົວຍັງມີບົດບາດສຳຄັນໃນການສ້າງພື້ນຖານສຳລັບການຮຽນຮູ້ພາສາ, ໂດຍຜ່ານການສົນທະນາ, ການອ່ານ ແລະ ການເລົ່າເລື່ອງ. ການມີສ່ວນຮ່ວມຂອງຊຸມຊົນ ແລະ ການຂະຫຍາຍວຽກງານນີ້ໄປສູ່ຊຸມຊົນ ແມ່ນສ່ວນໜຶ່ງທີ່ສຳຄັນຂອງຂະບວນການປະຕິຮູບ ທີ່ແນໃສ່ເພື່ອປ່ຽນແປງການຮຽນ-ການສອນ.

### ການຄົ້ນພົບທີ່ສຳຄັນ

| | | | |
|---|---|---|---|
| **ຜົນການຮຽນຮູ້ໜັງສື** | ໃນລະຫວ່າງປີ 2019 ຫາ 2021, ອັດຕາສ່ວນຂອງນັກຮຽນທີ່ມີຜົນການຮຽນດີ ໄດ້ເພີ່ມຂຶ້ນຈາກ 12% ເປັນ 21%, ແຕ່ມີຈຳນວນນັກຮຽນໜ້ອຍກວ່າ 1% ທີ່ບັນລຸຄາດໝາຍຂອງຫຼັກສູດພາສາລາວສະບັບປັບປຸງໃໝ່. ປະມານໜຶ່ງສ່ວນສີ່ຂອງນັກຮຽນ ປ.1 ມີລະດັບການຮູ້ໜັງສືທີ່ຕໍ່າຫຼາຍ ຫຼື ບໍ່ຮູ້ໜັງສືເລີຍ ໃນທັງສອງປີ. | ແຂວງຜົ້ງສາລີ ມີອັດຕາສ່ວນຂອງນັກຮຽນທີ່ມີຜົນການຮຽນຕໍ່າ ຫຼາຍທີ່ສຸດ ແລະ ແຂວງເຊກອງ ມີອັດຕາສ່ວນຂອງນັກຮຽນທີ່ມີຜົນການຮຽນດີ ສູງທີ່ສຸດ. ຄວາມແຕກໂຕນໃນຜົນການຮຽນຂອງ 2 ແຂວງນີ້ ໄດ້ຂະຫຍາຍກວ້າງຂຶ້ນລະຫວ່າງປີ 2019 ຫາ 2021. | ທັດສະນະກ່ຽວກັບລະດັບການຮຽນຂອງນັກຮຽນໃນຫຼັກສູດສະບັບປັບປຸງໃໝ່ສ່ວນຫຼາຍ ແມ່ນເປັນບວກ. |
| **ຄວາມສະເໝີພາບລະຫວ່າງບົດບາດຍິງ-ຊາຍ, ຄວາມພິການ ແລະ ການມີສ່ວນຮ່ວມໃນສັງຄົມ** | ເຖິງແມ່ນວ່າໃນປີ 2019 ຈະບໍ່ມີຄວາມແຕກຕ່າງ ລະຫວ່າງຜົນການຮຽນຂອງນັກຮຽນຍິງ ແລະ ນັກຮຽນຊາຍ, ແຕ່ໃນປີ 2021 ນັກຮຽນຍິງແມ່ນມີຜົນການຮຽນດີກວ່ານັກຮຽນຊາຍ ທັງໂດຍລວມ ແລະ ເຄິ່ງໜຶ່ງຂອງແຂວງເປົ້າໝາຍ (ເຊກອງ, ສາລະວັນ ແລະ ສະຫວັນນະເຂດ). | ສາມສ່ວນຮ້ອຍຂອງນັກຮຽນ ແມ່ນມີບັນຫາທາງຮ່າງກາຍ, ແລະ 23% ແມ່ນມີບັນຫາທາງສະຕິປັນຍາ (ສ່ວນຫຼາຍແມ່ນການຈື່ຈຳ ຫຼື ສະມາທິ). ໂດຍສະເລ່ຍແລ້ວ, ນັກຮຽນທີ່ບໍ່ມີບັນຫາຫຍັງ ມີຜົນທົດສອບດີກວ່າເມື່ອທຽບກັບຜູ້ທີ່ມີບັນຫາບາງຢ່າງ. | ນັກຮຽນທີ່ເວົ້າພາສາລາວ-ໄຕ ຢູ່ເຮືອນສາມາດເຮັດການທົດສອບໄດ້ດີກວ່າ. ຄວາມແຕກໂຕນໃນຜົນທົດສອບລະຫວ່າງກຸ່ມພາສາ ໄດ້ຂະຫຍາຍກວ້າງອອກໃນລະຫວ່າງປີ 2019 ຫາ 2021.<br>ນັກຮຽນທີ່ມາຈາກຄອບຄົວທີ່ມີຖານະດີ ແມ່ນມີແນວໂນ້ມທີ່ຈະເຮັດໄດ້ດີກວ່າ ນັກຮຽນຈາກຄອບຄົວທີ່ທຸກຍາກ. |

## ການປ່ຽນແປງທັດສະນະຄະຕິ ແລະ ທ່າທີຂອງນັກຮຽນຕໍ່ກັບການຮຽນຮູ້

**ທັດສະນະຄະຕິ ແລະ ທ່າທີຂອງນັກຮຽນຕໍ່ກັບການຮຽນຮູ້ ແມ່ນມີການປ່ຽນແປງໃນທາງບວກ ເນື່ອງມາຈາກການນໍາໃຊ້ຫຼັກສູດສະບັບປັບປຸງໃໝ່.**

ຜູ້ເຂົ້າຮ່ວມການສຶກສາຄົ້ນຄວ້າໄດ້ລາຍງານວ່າ ມີລະດັບການມີສ່ວນຮ່ວມ, ຄວາມສົນໃຈ, ການເຂົ້າຮ່ວມ, ແລະ ຄວາມເປັນຢູ່ທີ່ດີຂອງນັກຮຽນທີ່ດີຂຶ້ນ ແລະ ໃຫ້ເຫດຜົນວ່າ ຫຼັກສູດສະບັບປັບປຸງໃໝ່ປະກອບສ່ວນໃຫ້ແກ່ການປ່ຽນແປງນີ້.

ເນື່ອງຈາກຍັງຢູ່ໃນໄລຍະເລີ່ມຕົ້ນຂອງການປະຕິຮູບ, ການທີ່ເຫັນເຖິງການປ່ຽນແປງທີ່ດີຂຶ້ນໃນການພົວພັນ ແລະ ການມີສ່ວນຮ່ວມຂອງນັກຮຽນ ເຊິ່ງຖືວ່າແມ່ນຜົນການຄົ້ນພົບທີ່ສໍາຄັນ. ຜົນຈາກການຄົ້ນຄວ້າສາກົນຊີ້ໃຫ້ເຫັນວ່າ ການຮຽນຮູ້ຂອງນັກຮຽນບໍ່ໄດ້ມີພຽງແຕ່ຜົນການຮຽນເທົ່ານັ້ນ. ການມີສ່ວນຮ່ວມມັກຈະຕິດພັນກັບຜົນໄດ້ຮັບທີ່ດີຫຼາຍຢ່າງຂອງນັກຮຽນ, ລວມໄປເຖິງ ຜົນສໍາເລັດດ້ານອື່ນໆ, ຄວາມສໍາເລັດໃນການຮຽນ ແລະ ຄວາມເປັນຢູ່ທີ່ດີຂອງນັກຮຽນ.

## ການຄົ້ນພົບທີ່ສໍາຄັນ

**ທັດສະນະຄະຕິ ແລະ ລັກສະນະນິໄສຂອງນັກຮຽນ**

ຜູ້ເຂົ້າຮ່ວມກໍລະນີສຶກສາຄົ້ນຄວ້າ ໄດ້ພົບຄວາມເຊື່ອມໂຍງລະຫວ່າງ ນັກຮຽນມີຄວາມມ່ວນຊື່ນ ກັບ ການຮຽນພາສາລາວ ແລະ ຫຼັກສູດສະບັບປັບປຸງໃໝ່.

ຜູ້ເຂົ້າຮ່ວມກໍລະນີສຶກສາ ໄດ້ພົບຄວາມເຊື່ອມໂຍງລະຫວ່າງ ລະດັບການມີສ່ວນຮ່ວມ, ຄວາມສົນໃຈ, ການເຂົ້າຮ່ວມ, ແລະ ຄວາມເປັນຢູ່ທີ່ດີຂອງນັກຮຽນ ກັບ ວິທີການສອນໃໝ່.

ຂໍ້ມູນຊີ້ໃຫ້ເຫັນວ່າ ຄວາມຮັບຮູ້ກ່ຽວກັບການສຶກສາແບບຮຽນຮ່ວມ ແລະ ຍຸດທະສາດທີ່ກ່ຽວຂ້ອງໄດ້ປະກອບສ່ວນໃຫ້ແກ່ການມີສ່ວນຮ່ວມ ແລະ ຄວາມເປັນຢູ່ທີ່ດີຂຶ້ນຂອງນັກຮຽນຍິງ ແລະ ຊາຍ, ນັກຮຽນທີ່ມີຜົນການຮຽນບໍ່ດີ ແລະ ຜູ້ທີ່ບໍ່ເວົ້າພາສາລາວເປັນພາສາແມ່.

ເນື່ອງຈາກບັນຫາອັດຕາການຂາດຮຽນ ແລະ ການອອກໂຮງຮຽນທີ່ສູງ, ແລະ ຄວາມຈໍາເປັນໃນການປັບປຸງຜົນການຮຽນໃນ ສປປ ລາວ, ຜົນຈາກການຄົ້ນຄວ້າກ່ຽວກັບການມີສ່ວນຮ່ວມຂອງນັກຮຽນ ແມ່ນມີທ່າອ່ຽງທີ່ດີ ແລະ ຕ້ອງໄດ້ຮັບການສົ່ງເສີມ. ຂໍ້ມູນຂອງການສຶກສານີ້ໄດ້ຊີ້ໃຫ້ເຫັນວ່າ ຫຼັກສູດໃໝ່ໄດ້ສະໜັບສະໜູນໃຫ້ນັກຮຽນມີຄວາມມ່ວນຊື່ນກັບການຮຽນພາສາລາວ ແລະ ເຂົ້າຮ່ວມກິດຈະກໍາໃນໂຮງຮຽນຫຼາຍຂຶ້ນ, ແຕ່ກໍຍັງຕ້ອງເຮັດອີກຫຼາຍຢ່າງ ເພື່ອສະໜັບສະໜູນໃຫ້ພວກເຂົາຫ້າວຫັນ ມີສ່ວນຮ່ວມໃນກິດຈະກໍາການຮຽນ.

### ນັກຮຽນມີຄວາມສົນໃຈ ແລະ ເອົາໃຈໃສ່ຫຼາຍກວ່າແຕ່ກ່ອນ.  - ຜູ້ຖືກສໍາພາດຢູ່ຂັ້ນສູນກາງ

ເມື່ອພວກເຮົາຄໍານຶງເຖິງ ການມີສ່ວນຮ່ວມຂອງນັກຮຽນແບບຕໍ່ເນື່ອງນັ້ນ, ຈໍາເປັນຕ້ອງໄດ້ແຍກລະຫວ່າງ ການມີສ່ວນຮ່ວມທີ່ມີແຕ່ຄູເປັນຜູ້ສົ່ງຄວາມຮູ້ຢ່າງດຽວ ກັບ ການມີສ່ວນຮ່ວມທີ່ມີຄວາມຫ້າວຫັນ. ຕົວຢ່າງຂອງຮູບແບບການມີສ່ວນຮ່ວມ ໃນຮູບແບບທີ່ມີແຕ່ຄູເປັນຜູ້ສົ່ງຄວາມຮູ້ຢ່າງດຽວປະກອບມີ ການເອົາໃຈໃສ່ໃນໂມງຮຽນ, ການເຮັດກິດຈະກໍາຕາມທີ່ວາງແຜນໄວ້ ແລະ ການເຮັດວຽກຮ່ວມກັບຜູ້ອື່ນ ເມື່ອຖືກບອກໃຫ້ເຮັດ. ການມີສ່ວນຮ່ວມຢ່າງຫ້າວຫັນຂອງນັກຮຽນລວມມີ ການແລກປ່ຽນຄວາມຄິດເຫັນ, ການຊອກຫາ ແລະ ຂໍຄໍາຕິຊົມ, ແລະ ການກ້າທີ່ຈະລອງສ່ຽງ. ສະພາບຂອງຫ້ອງຮຽນສ່ວນຫຼາຍໄດ້ຖືກສັງເກດເຫັນວ່າ ນັກຮຽນຈະເຊື່ອຟັງ, ໂດຍທີ່ນັກຮຽນຈະເຮັດໃນສິ່ງທີ່ຄູບອກ ແລະ ກິດຈະກໍາທີ່ເປັນຂັ້ນຕອນ ແລະ ເຮັດໃຫ້ສໍາເລັດໜ້າວຽກເທົ່ານັ້ນ. ມີພຽງຫ້ອງຮຽນຈໍານວນໜ້ອຍໜຶ່ງເທົ່ານັ້ນ ທີ່ຖືກປະເມີນວ່າມີການຮ່ວມມື ແລະ ການຊ່ວຍເຫຼືອກັນ, ພ້ອມທັງມີບັນຍາກາດການຮຽນທີ່ມ່ວນຊື່ນ.

ການຊ່ວຍໃຫ້ນັກຮຽນຫ້າວຫັນ ມີສ່ວນຮ່ວມໃນກິດຈະກໍາການຮຽນ ແມ່ນຈໍາເປັນຕ້ອງມີແນວທາງ ແລະ ວິທີການທີ່ມີການຮ່ວມມືກັນ ແລະ ມີຈຸດສຸມໃນລະບົບການສຶກສາ, ໂຮງຮຽນ, ຈາກພໍ່ແມ່ຜູ້ປົກຄອງ ແລະ ຊຸມຊົນ ເພື່ອສ້າງຄວາມຄາດຫວັງທີ່ສອດຄ່ອງ ແລະ ໃຫ້ການສະໜັບສະໜູນແກ່ການຮຽນຮູ້. ພາກສ່ວນໜຶ່ງທີ່ສໍາຄັນແມ່ນ ການສະໜັບສະໜູນຄູ ສໍາລັບການຮຽນຮູ້ຂອງເຂົາເຈົ້າ, ເພື່ອໃຫ້ຄູສອນມີທັກສະ, ຄວາມຮູ້ ແລະ ເຄື່ອງມືໃນການນໍາໃຊ້ຂໍ້ມູນຫຼັກຖານ ເພື່ອແນ່ຈຸດສຸມການສອນຂອງເຂົາເຈົ້າໃຫ້ຖືກກັບ ຄວາມຕ້ອງການຂອງນັກຮຽນ.




## ຄຸນນະພາບການສອນ ແລະ ຜົນການຮູ້ໜັງສືຂອງນັກຮຽນ

### ປັດໄຈຂອງນັກຮຽນ, ຄູສອນ ແລະ ໂຮງຮຽນ ແມ່ນກ່ຽວຂ້ອງກັບລະດັບຄວາມສາມາດຂອງນັກຮຽນຂັ້ນ ປ.1.

ການຄົ້ນພົບ ໃນປີ 2021 ໄດ້ຢັ້ງຢືນເຖິງການເຊື່ອມໂຍງລະຫວ່າງ ປັດໄຈພື້ນຖານຄອບຄົວຂອງນັກຮຽນ ແລະ ຜົນການຂອງນັກຮຽນ.

ຜົນການສຶກສາຄົ້ນຄວ້າໃນປີ 2021 ແມ່ນເຫັນວ່າມີຄວາມແຕກຕ່າງຈາກປີ 2019. ການສອນພາສາລາວຫຼາຍຊົ່ວໂມງຕໍ່ອາທິດ ແມ່ນມີຄວາມເຊື່ອມໂຍງກັບ ຜົນການສອບເສັງຂັ້ນ ປ.1 ທີ່ດີຂຶ້ນໃນປີ 2021. ແນວໃດກໍ່ຕາມ, ຜົນການສຶກສາຄົ້ນຄວ້າຍັງສະແດງໃຫ້ເຫັນວ່າ ຄວາມເຊື່ອມໂຍງລະຫວ່າງການສອນຂອງຄູ ແລະ ຜົນການຮຽນຂອງນັກຮຽນ ແມ່ນບໍ່ຄ່ອຍຊັດເຈນໃນປີ 2021, ສະແດງວ່າເຮົາຈໍາເປັນຕ້ອງໃຫ້ເວລາ ແລະ ການຊ່ວຍເຫຼືອຄູໃຫ້ຫຼາຍຂຶ້ນ.

## ປັດໄຈຫຼັກທີ່ສົ່ງຜົນຕໍ່ຜົນການຮຽນຂອງນັກຮຽນ

### ປັດໄຈດ້ານນັກຮຽນ

ນັກຮຽນມີຜົນການສອບເສັງ ປ.1 ທີ່ດີຂຶ້ນ ຖ້າໄດ້ເຂົ້າຮຽນໃນຊັ້ນອະນຸບານ ຫຼື ການສຶກສາກ່ອນໄວຮຽນ, ໃຊ້ພາສາລາວ-ໄຕ ເປັນພາສາແມ່ , ໄດ້ຟັງນິທານມາຫຼາຍ ແລະ ມີປຶ້ມ ແລະ ສື່ພາສາລາວຫຼາຍຢູ່ເຮືອນ ແລະ ໃນຊຸມຊົນຂອງເຂົາເຈົ້າ, ມາຈາກຄອບຄົວທີ່ມີຖານະດີ, ແລະ ມີການຂາດຮຽນຕໍ່າ.

### ປັດໄຈດ້ານຄູ

ນັກຮຽນມີທ່າອ່ຽງທີ່ຈະເຮັດໄດ້ດີກວ່າໃນການສອບເສັງ ປ.1 ເມື່ອຄູສອນຂອງເຂົາເຈົ້າເປັນເພດຍິງ, ສູງອາຍຸ, ມີປະສົບການຫຼາຍ ແລະ ມີສະຖານະເປັນຄູປະຈໍາ.

ຄວາມສອດຄ່ອງລະຫວ່າງພາສາແມ່ຂອງນັກຮຽນ ແລະ ຂອງຄູ, ໃນກໍລະນີທີ່ເປັນ ພາສາລາວ-ໄຕ, ແມ່ນມີຄວາມກ່ຽວພັນກັບຜົນການທົດສອບທີ່ດີ.

### ປັດໄຈດ້ານໂຮງຮຽນ

ນັກຮຽນໃນໂຮງຮຽນທີ່ບໍ່ມີຫ້ອງຄວບຂັ້ນ ປ.1 ຫຼື ມີຫ້ອງຄວບຂັ້ນປ.1 ຢູ່ 2 ຫ້ອງ ມີທ່າອ່ຽງທີ່ຈະຮຽນໄດ້ດີກວ່ານັກຮຽນໃນໂຮງຮຽນທີ່ມີຫ້ອງຄວບ ຂັ້ນ ປ.1 ພຽງຫ້ອງດຽວເທົ່ານັ້ນ.

ເຖິງວ່າຄວາມເຊື່ອມໂຍງລະຫວ່າງຜົນການສອບເສັງ ແລະ ຈໍານວນຂອງສິ່ງອໍານວຍຄວາມສະດວກພາຍໃນໂຮງຮຽນຈະບໍ່ຄ່ອຍຊັດເຈນ ແຕ່ກໍ່ມີຄວາມກ່ຽວພັນໃນທາງບວກ.

# ຄຳແນະນຳຈາກການສຶກສາຄົ້ນຄວ້າໂດຍລວມ

ຄຳແນະນຳຈາກການສຶກສາຄົ້ນຄວ້າແມ່ນອີງໃສ່ 3 ຂົງເຂດດ້ານນະໂຍບາຍ ແລະ ແຜນງານທີ່ມີທ່າແຮງ:

## ການອອກແບບການສະໜັບສະໜູນການຈັດຕັ້ງປະຕິບັດຫຼັກສູດ

1. ສືບຕໍ່ເຂົ້າຮ່ວມໃນຂົງເຂດນະໂຍບາຍທີ່ກ່ຽວຂ້ອງກັບການອອກແບບການພັດທະນາວິຊາຊີບໃນໄລຍະຍາວ, ລວມທັງ ການຄຸ້ມຄອງແຮງງານຄູ ແລະ ອຸປະກອນທີ່ສະໜັບສະໜູນການພັດທະນາວິຊາຊີບ.
2. ສືບຕໍ່ສ້າງໂອກາດໃນການປະສານສົມທົບກັບບັນດາພາກສ່ວນທີ່ກ່ຽວຂ້ອງຕ່າງໆ ເພື່ອແນໃສ່ເພີ່ມທະວີຄວາມສອດຄ່ອງລະຫວ່າງນະໂຍບາຍ ແລະ ການປະຕິບັດ.
3. ສະໜັບສະໜູນໂອກາດ ແລະ ການຮ່ວມມື ທີ່ສາມາດສ້າງທັກສະພາສາປາກເວົ້າຂອງນັກຮຽນ ແລະ ການກຽມຄວາມພ້ອມກ່ອນເຂົ້າໂຮງຮຽນ, ທັງໃນການສະຖານທີ່ສຶກສາ ແລະ ຢູ່ບ້ານ.
4. ສະໜັບສະໜູນຍຸດທະສາດການສື່ສານ ທີ່ແນໃສ່ການສ້າງຄວາມຮູ້ກ່ຽວກັບຫຼັກສູດສະບັບປັບປຸງໃໝ່ ແລະ ຄວາມສຳຄັນຂອງການສຶກສາໃຫ້ແກ່ພໍ່ແມ່ຜູ້ປົກຄອງ ແລະ ຊຸມຊົນ.
5. ກຳນົດບັນດາຂົງເຂດບູລິມະສິດໃນການສ້າງຂີດຄວາມສາມາດໃນຂັ້ນສູນກາງ ໃນຂົງເຂດທີ່ຕິດພັນກັບການພັດທະນາຫຼັກສູດ ແລະ ການພັດທະນາວິຊາຊີບ, ແລະ ວິທີການໃນການສະໜັບສະໜູນຂົງເຂດເຫຼົ່ານີ້.

## ການລົງທຶນໃສ່ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ

6. ສະໜັບສະໜູນການເກັບກຳ ແລະ ການນຳໃຊ້ຫຼັກຖານ ເພື່ອປັບປຸງຮູບແບບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ.
7. ອອກແບບແຜນງານການຊ່ວຍເຫຼືອດ້ານວິຊາການໃຫ້ແກ່ຄູສອນທີ່ເປັນລະບົບ, ແລະ ມີການສະໜອງຊັບພະຍາກອນທີ່ດີ.
8. ສືບຕໍ່ສ້າງຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບການສຶກສາແບບຮຽນຮ່ວມ ເພື່ອຝັງການປະຕິບັດການສຶກສາຮຽນຮ່ວມທີ່ດີເຂົ້າໃນລະບົບການສຶກສາ.

## ການລົງທຶນໃສ່ການເກັບກຳ ແລະ ນຳໃຊ້ຂໍ້ມູນການຮຽນຮູ້ຂອງນັກຮຽນ

9. ດຳເນີນການປະເມີນຜົນຢ່າງເປັນປົກກະຕິ ເພື່ອວັດແທກ ແລະ ເຂົ້າໃຈຜົນການຮຽນຮູ້ຂອງນັກຮຽນໃນຕອນຕົ້ນຂອງຊັ້ນປະຖົມ.
10. ສະໜັບສະໜູນການຕີຄວາມໝາຍ ແລະ ການນຳໃຊ້ຂໍ້ມູນຈາກການປະເມີນຜົນການຮຽນນີ້ ເພື່ອຊ່ວຍກຳນົດຈຸດສຸມໃນການຊ່ວຍເຫຼືອ.
11. ດຳເນີນການສຶກສາຄົ້ນຄວ້າຕື່ມອີກ ເພື່ອໃຫ້ເຂົ້າໃຈປັດໄຈທີ່ກ່ຽວຂ້ອງກັບຜົນການຮຽນທີ່ດີ ແລະ ບໍ່ດີ, ແລະ ຄວາມແຕກຕ່າງກັນໃນຜົນການຮຽນຮູ້ຂອງນັກຮຽນ.
12. ກວດກາການຈັດຕັ້ງປະຕິບັດຍຸດທະສາດການປະເມີນ ເພື່ອປັບປຸງການຮຽນໂດຍຄູອາຈານ.
13. ໃຫ້ການສະໜັບສະໜູນແກ່ຄູສອນ ແລະ ຜູ້ອຳນວຍການ ກ່ຽວກັບວິທີການຕີຄວາມໝາຍຂໍ້ມູນ ແລະ ການນຳໃຊ້ຂໍ້ມູນເພື່ອຊ່ວຍຢັ້ງຢືນໃນການສອນ.
14. ພິຈາລະນາວ່າ ນະໂຍບາຍຈະສາມາດເຮັດໃຫ້ຄູມີຄວາມຍືດຍຸ່ນໃນການດັດປັບແຜນ ແລະ ຄວາມໄວໃນການສອນໄດ້ແນວໃດ ເພື່ອໃຫ້ຄູຕອບສະໜອງຕໍ່ຄວາມຕ້ອງການໃນການຮຽນຮູ້ຂອງນັກຮຽນໄດ້.

ເຂົ້າ ເວັບໄຊ້ຂອງ ກະຊວງການຕ່າງປະເທດ ແລະ ການຄ້າຂອງອົດສະຕຣາລີ ເພື່ອອ່ານບົດລາຍງານສະບັບເຕັມ "ການປະເມີນການລົງທຶນຂອງອົດສະຕຣາລີໃນການພັດທະນາຄູ ໃນ ສປປ ລາວ", ແລະ ເພື່ອເບິ່ງລາຍການອ້າງອີງ.

@2023 ເຄືອຈັກກະພົບແຫ່ງອົດສະຕຣາລີ, ຕາງໜ້າໂດຍ ກະຊວງການຕ່າງປະເທດ ແລະ ການຄ້າຂອງອົດສະຕຣາລີ.

ການອ້າງອີງແບບ APA ທີ່ແນະນຳ:

Wong, D., Hollingsworth, H., Anderson, P., Goundar, G., Mercer, A. (2023).

ສິ່ງທີ່ໂດດເດັ່ນໃນບົດລາຍງານ: ການປະເມີນການລົງທຶນຂອງລັດຖະບານອົດສະຕຣາລີໃນການພັດທະນາຄູຢູ່ ສປປ ລາວ: ບົດລາຍງານຂັ້ນສຸດທ້າຍ. ສະພາຄົ້ນຄວ້າການສຶກສາຂອງອົດສະຕຣາລີ.